ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1850 /ກຈພ

ນະຄອນຫລວງວຽງຈັນ, ວັນທີ 01.09.2022

# ແຈ້ງການ

ເຖິງ : - ຫ້ອງການ, ບັນດາກົມ, ສະຖາບັນ, ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້

- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້.

ເລື່ອງ: ທຶນການສຶກສາສຳລັບພະນັກງານ-ລັດຖະກອນ ໄປຮຽນຕໍ່ປະລິນຍາຕີ ພາຍໃນປະເທດ ຕາມໂຕເລກແບ່ງປັນຂອງກະຊວງສຶກສາທິການ ແລະ ກິລາ ປະຈຳສົກປີ 2022-2023.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງກະຊວງສຶກສາ ແລະ ກິລາ ສະບັບເລກທີ 2987/ຫກ, ລົງວັນທີ 15 ສິງຫາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາ ພະນັກງານ-ລັດຖະກອນ ສະໝັກທຶນ ການສຶກສາຫຼັກສູດປະລິນຍາຕີຕໍ່ເນື່ອງ 1.5 ປີ (ພາກປົກກະຕິ) ປະຈຳສົກປີ 2022-2023 ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ສະຖາບັນການສຶກສາ | ສາຂາວິຊາ | ຈ/ນທຶນ | ໝາຍເຫດ |
|---|---|---|---|---|
| I | ມະຫາວິທະຍາໄລແຫ່ງຊາດ | | | |
| 1 | ຄະນະອັກສອນສາດ | ພາສາອັງກິດ | 2 | |
| 2 | ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ | ບໍລິຫານທຸລະກິດທົ່ວໄປ | 2 | |
| 3 | ຄະນະກະເສດສາດ | ການປູກຝັງ | 5 | |
| | | ການລ້ຽງສັດ | 5 | |
| | | ການປະມົງ | 5 | |
| 4 | ຄະນະວິທະຍາສາດປ່າໄມ້ | ປ່າໄມ້ | 8 | |
| 5 | ວິສະວະກຳຊັບພະຍາກອນນ້ຳ | ຊົນລະປະທານ | 5 | |
| ລວມ | | | 32 | |

ເງື່ອນໄຂ ແລະ ວິທີການຄັດເລືອກ :

1. ຄັດເລືອກເອົາພະນັກງານທີ່ຢູ່ເປົ້າໝາຍການກໍ່ສ້າງຂອງການຈັດຕັ້ງ;
2. ຕ້ອງເປັນຜູ້ທີ່ມີຄຸນສົມບັດດີ, ບໍ່ຖືກປະຕິບັດວິໄນມາກ່ອນ, ມີສຸຂະພາບແຂງແຮງດີ, ມີຄວາມອົດທົນຂະຫຍັນໝັ່ນພຽນ, ສະຫງວນຮັກ ແລະ ມັກວິຊາຊີບທີ່ຕົນເອງຮຽນ;
3. ພະນັກງານທຸກຄົນທີ່ຈະໄປຮຽນຕໍ່ຕ້ອງມີຜົນງານດີ, ຕ້ອງເປັນລັດຖະກອນສົມບູນ ແລະ ໄດ້ຜ່ານການເຮັດວຽກຕົວຈິງມາ ແລ້ວຢ່າງໜ້ອຍ 2 ປີ;
4. ພະນັກງານຮຽນຈົບວິຊາສະເພາະໃດຕ້ອງໄປຮຽນຕໍ່ວິຊາສະເພາະນັ້ນ.
5. ກ່ອນຈະໄປຮຽນການຈັດຕັ້ງພາກສ່ວນກ່ຽວຂ້ອງກັບລັດຖະກອນຜູ້ທີ່ໄດ້ຮັບທຶນຕ້ອງແນະນຳໃຫ້ຜູ້ກ່ຽວຂຽນຄຳຮ້ອງ ແລະ ປະຕິຍານຕົນພ້ອມທັງມີຜູ້ຮັບປະກັນເມື່ອຮຽນຈົບການສຶກສາແລ້ວ ຕ້ອງກັບຄືນສືບຕໍ່ວຽກງານ ໃນກົມກອງເກົ່າຂອງຕົນ;
6. ຜູ້ທີ່ໄດ້ຮັບການຄັດເລືອກຕ້ອງປະກອບເອກະສານໃຫ້ຄົບຖ້ວນເຊັ່ນ:ໃບປະກາສະນິຍະບັດຊັ້ນສູງສຸດຂອງຕົນ, ໃບຄະແນນຈົບມັດທະຍົມຕອນປາຍ ແລະ ໃບສະເໜີຈາກພາກສ່ວນກ່ຽວຂ້ອງ ແລະ ສຳເນົາຊີວະປະຫວັດລັດຖະກອນ, ເພື່ອປະກອບໃຫ້ມະຫາວິທະຍາໄລແຫ່ງຊາດ;
7. ເມື່ອຄັດເລືອກໄດ້ແລ້ວໃຫ້ສົ່ງລາຍຊື່ເຖິງກົມຈັດຕັ້ງ ແລະ ພະນັກງານ ກ່ອນວັນທີ **23/09/2022** ແລ້ວໃຫ້ມາພົວພັນເອົາໃບນຳສົ່ງຢູ່ ກົມຈັດຕັ້ງ ແລະ ພະນັກງານ ແລະ ໃຫ້ໄປສະເໜີຕົວລົງທະບຽນຢູ່ມະຫາວິທະຍາໄລແຫ່ງຊາດເລີຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ຢ່າງເຂັ້ມງວດ.

**ຫົວໜ້າກົມ**

ບຸນທະວີ ໄຊຍະເພັດ

ບ່ອນສົ່ງ:

1. ທຸກພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ
2. ເກັບມ້ຽນ 02 ສະບັບ